พระคำพีสำลับหຼານນ້ອຍ
ສະເໜີ



# ຟ້າສະຫວັນ, ບ້ານອັນສວຍງາມ ຂອງພຣະເຈົ້າ

ຂຽນໂດຍ: Edward Hughes

ແຕ້ມຮູບໂດຍ: Lazarus
Alastair Paterson

ດັດແກ້ໂດຍ: Sarah S.

ແປໂດຍ: Christian Lingua

ຈັດພິມໂດຍ: Bible for Children
www.M1914.org

©2020 Bible for Children, Inc.
ໃບອະນຸຍາດ: ທ່ານສາມາດອັດສຳເນົາ ຫຼືຕີພິມເລື່ອງນີ້ໄດ້
ແຕ່ຫ້າມເຮັດເພື່ອຈຳໜ່າຍເດັດຂາດ

ຕອນທີ່ພຣະເຢຊູຊົງປະທັບເທິງແຜ່ນດິນໂລກນີ້
ພຣະອົງໄດ້ສອນສາວົກຂອງພຣະອົງກ່ຽວກັບແຜ່ນດິນສະຫວັນ.
ພຣະອົງຊົງເອີ້ນວ່າ, “ເຮືອນແຫ່ງພຣະບິດາຂອງເຮົາ.”
ແລະຊົງກ່າວວ່າໃນທີ່ນັ້ນມີທີ່ຢູ່ຫຼາຍຫ້ອງ.
ຄະລືຫາດແມ່ນເຮືອນຫຼັງໃຫຍ່,
ສວຍງາມ.
ແຕ່ຟ້າສະຫວັນໃຫຍ່ກວ່ານັ້ນ
ແລະສວຍງາມກວ່ານັ້ນຫຼາຍ.



ພຣະເຢຊູຊົງກ່າວວ່າ, "ເຮົາຈະໄປຈັດຕຽມບ່ອນໄວ້ໃຫ້ທ່ານ
ແລະຖ້າເຮົາໄປຈັດຕຽມບ່ອນໄວ້ໃຫ້ພວກເຈົ້າແລ້ວໆ
ເຮົາຈະກັບມາຮັບເອົາພວກເຈົ້າໄປຢູ່ກັບເຮົາໃນທີ່ນັ້ນ."
ພຣະເຢຊູຊົງສະເດັດຂຶ້ນສູ່ຟ້າສະຫວັນ
ຫຼັງຈາກທີ່ພຣະອົງຊົງເປັນຄືນມາແລ້ວ.



ໃນຂະນະທີ່ສາວົກຂອງພຣະອົງພວມເຝົ້າເບິ່ງພຣະເຢຊູຖືກຮັບຂຶ້ນໄປນັ້ນ, ກ້ອນເມກໄດ້ມາປົກບັງພຣະອົງໃຫ້ພົ້ນຈາກສາຍຕາຂອງພວກເຂົາ.



ຕັ້ງແຕ່ນັ້ນມາ, ຄຣິສຕຽນບໍ່ເຄີຍລືມພຣະສັນຍາຂອງພຣະເຢຊູທີ່ວ່າ
ຈະກັບມາຮັບເອົາພວກເຂົາໄປຢູ່ກັບພຣະອົງ. ພຣະເຢຊູຊົງກ່າວວ່າ
ພຣະອົງຈະສະເດັດກັບມາໃນເວລາທີ່ພວກເຮົາບໍ່ຮູ້.
ແຕ່ຈະເກີດຫຍັງຂຶ້ນກັບຄຣິສຕຽນຜູ້ທີ່ຕາຍໄປແລ້ວໃນ
ຂະນະທີ່ພຣະອົງຍັງບໍ່ໄດ້ສະເດັດກັບມາເທື່ອ?
ພຣະຄຳພີກ່າວວ່າ ພວກເຂົາໄດ້ໄປຢູ່ກັ
ບພຣະອົງແລ້ວທັນທີທີ່ຕາຍໄປ.
ການທີ່ຫລຸດອອກຈາກຮ່າງກາຍນີ້
ຄືການໄດ້ຢູ່ກັບອົງພຣະຜູ້ເປັນເຈົ້າ.



ພຣະທຳພຣະນິມິດ, ໜັງສືເຫຼັ້ມສຸດທ້າຍໃນພຣະຄຳພີ
ໄດ້ບອກພວກເຮົາເຖິງຄວາມສວຍງາມຂອງຟ້າສະຫວັນ.
ທຸກຢ່າງແມ່ນວິເສດໝົດ, ແຕ່ສິ່ງທີ່ວິເສດທີ່ສຸດກໍຄື
ສະຫວັນແມ່ນທີ່ປະທັບຂອງພຣະເຈົ້າ.
ພຣະເຈົ້າຊົງສະຖິດຢູ່ທຸກຫົນແຫ່ງກໍຈິງ,
ແຕ່ບັນລັງຂອງພຣະອົງນັ້ນ
ຕັ້ງເທິງຟ້າສະຫວັນ.





ທູດສະຫວັນ ແລະສິ່ງມີຊີວິດທັງປວງເທິງຟ້າສະຫວັນ
ກໍນະມັດສະການພຣະເຈົ້າ. ສະນັ້ນ
ໄພ່ພົນທັງປວງຂອງພຣະເຈົ້າຜູ້ທີ່ຕາຍໄປແລ້ວ
ແລະໄດ້ໄປຍັງສະຫວັນ,
ພວກເຮົາກໍຮ້ອງບົດເພງພິເສດເພື່ອ
ສັນລະເສີນພຣະເຈົ້າ.



ຕໍ່ໄປນີ້ແມ່ນຖ້ອຍຄຳໜ່ງຈາກບົດເພງທີ່ພວກເຂົາໄດ້ຮ້ອງຄື:
“ພຣະອົງຊົງເປັນຜູ້ສົມຄວນຈະຊົງຮັບມ້ວນໜັງສື
ແລະແກະຕາມ້ວນໜັງສືອອກ
ເພາະວ່າພຣະອົງຊົງຖືກຂ້າແລ້ວ
ແລະດ້ວຍພຣະໂລຫິດຂອງພຣະອົງນັ້ນ
ພຣະອົງໄດ້ຊົງໄຖ່ມະນຸດທຸກເຜົ່າທຸກພາສາ
ທຸກຊາດ ແລະທຸກປະເທດສຳລັບພຣະເຈົ້າ.”
(ພນມ 5:9)



ໜ້າສຸດທ້າຍຂອງພຣະຄຳພີໄດ້ພັນລະນາວ່າ ສະຫວັນເປັນເໝືອນກັບ "ກຸງເຢຣູຊາເລັມໃໝ່". ມັນກວ້າງໃຫຍ່ຫຼາຍ ແລະມີກຳແພງສູງອ້ອມຮອບ. ກຳແພງນັ້ນເຮັດດ້ວຍແກ້ວມະນີໂຊດອັນສົດໃສທີ່ມີຄ່າແພງ. ຖານຂອງກຳແພງນັ້ນ ປະກອບໄປດ້ວຍເພັດພອຍ ແລະຫີນມີຄ່າທຸກຊະນິດ, ສ່ອງແສງສົດໃສເຫຼືອງເຫຼື້ອມ. ປະຕູນະຄອນແຕ່ລະອັນແມ່ນເຮັດດ້ວຍໄຂ່ມຸກກ້ອນໃຫຍ່ກ້ອນດຽວ.



ປະຕູໄຂ່ມຸກທີ່ສຸດຍອດເຫຼົ່ານີ້ບໍ່ເຄີຍປິດ.
ລອງເຂົ້າໄປເບິ່ງຂ້າງໃນກັນເທາະ... ວ້າວວວວ!
ພາຍໃນສະຫວັນຍິ່ງສວຍງາມກວ່ານັ້ນຫຼາຍ.
ທັງນະຄອນເຮັດດ້ວຍຄຳບໍລິສຸດ, ສົດໃສເໝືອນແກ້ວ.
ແມ່ນແຕ່ຖະໜົນກໍ
ປູດ້ວຍທອງຄຳ.



ແມ່ນ້ຳແຫ່ງຊີວິດອັນສົດໃສ ແລະສວຍງາມ
ໄຫຼອອກມາຈາກບັນລັງຂອງພຣະເຈົ້າ.
ອີກຟາກໜຶ່ງຂອງແມ່ນ້ຳແມ່ນຕົ້ນໄມ້ແຫ່ງຊີວິດ,
ຊຶ່ງແຕ່ກ່ອນເຄີຍພົບຢູ່ໃນສວນເອເດັນ. ຕົ້ນໄມ້ນີ້ແມ່ນພິເສດຫຼາຍ,
ມັນເກີດຜົນສິບສອງຊະນິດແຕກຕ່າງກັນ
ແລະແຕ່ລະເດືອນອອກຜົນແຕ່ລະຊະນິດ.
ແລະໃບຂອງຕົ້ນໄມ້ແຫ່ງຊີວິດນັ້ນແມ່ນສຳລັບການປຽວຢາຮັກສາຊົນຊາດ
ທັງປວງ.



ຢູ່ສະຫວັນບໍ່ຈຳເປັນຕ້ອງອາໃສແສງສະຫວ່າງຈາກຕາເວັນ
ຫຼືດວງເດືອນອີກ.
ເພາະໃນທີ່ນັ້ນຮຸ່ງແຈ້ງໄປດ້ວຍພຣະສະຫງ່າລາສີຂອງພຣະເຈົ້າ.
ໃນທີ່ນັ້ນບໍ່ມີກາງຄືນອີກຕໍ່ໄປ.



ແມ່ນແຕ່ສັດທີ່ຟ້າສະຫວັນກໍຕ່າງຈາກສັດທີ່ແຜ່ນດິນໂລກ.
ສັດທັງໝົດແມ່ນເຊື່ອຟັງ ແລະເປັນມິດ.
ໝາປ່າ ແລະແກະທີ່ກິນຫຍ້າຮ່ວມກັນ.
ແມ່ນແຕ່ສິງໂຕໃຫຍ່ກໍຍັງກິນຟາງຄືກັນກັບງົວ.
ອົງພຣະຜູ້ເປັນເຈົ້າຊົງກ່າວວ່າ, “ໃນພູເຂົາສັກສິດຂອງເຮົານັ້ນ
ພວກມັນຈະບໍ່ເຈັບປວດ ຫຼືຖືກທຳລາຍອີກຕໍ່ໄປ.”



ເມື່ອພວກເຮົາເບິ່ງອ້ອມຂ້າງ,
ພວກເຮົາຈະສັງເກດເຫັນສິ່ງທີ່ໃນສະຫວັນຈະບໍ່ມີອີກ.
ຄຳເວົ້າຮ້າຍໆຈະບໍ່ໄດ້ຍິນອີກແລ້ວ. ໃນທີ່ນັ້ນບໍ່ມີການຜິດຖຽງ
ຫຼືການເຫັນແກ່ຕົວອີກແລ້ວ.



ປະຕູເຮືອນບໍ່ຈຳເປັນຕ້ອງໃສ່ກອນກໍໄດ້ ເພາະໃນສະຫວັນບໍ່ມີໂຈນ.
ບໍ່ມີຄົນຂີ້ຕົວະ, ບໍ່ມີຄາດຕະກອນ, ພໍ່ມົດ ຫຼືຄົນຊົ່ວຮ້າຍອີກຕໍ່ໄປ.
ໃນສະຫວັນແມ່ນບໍ່ມີການບາບທຸກປະເພດເລີຍ.



ຢູ່ໃນສະຫວັນກັບພຣະເຈົ້າແມ່ນບໍ່ນ້ຳຕາອີກ.
ບາງເທື່ອ, ໄພ່ພົນຂອງພຣະເຈົ້າຮ້ອງໄຫ້
ເພາະຄວາມເສົ້າເສຍໃຈອັນໃຫຍ່ກັບຊີວິດນີ້.
ແຕ່ໃນສະຫວັນ
ພຣະເຈົ້າຈະເຊັດນ້ຳຕາທຸກຢົດ.



ໃນສະຫວັນບໍ່ມີຄວາມຕາຍອີກຕໍ່ໄປ.
ໄພ່ພົນຂອງພຣະເຈົ້າຈະໄດ້ຢູ່ນຳພຣະເຈົ້າຕະຫຼອດໄປເປັນນິດ.
ບໍ່ມີເສົ້າເສຍໃຈ, ບໍ່ມີສຽງຮ້ອງໄຫ້, ບໍ່ມີຄວາມເຈັບປວດອີກ.
ບໍ່ມີການເຈັບໄຂ້, ບໍ່ມີການພາກຈາກກັນ, ບໍ່ມີການຈັດງານສົບອີກ.
ທຸກຄົນທີ່ຢູ່ໃນສະຫວັນຈະໄ
ດ້ຢູ່ກັບພຣະເຈົ້າຕະຫຼອດໄປ
ເປັນນິດຢ່າງມີຄວາມສຸກ.



ສິ່ງທີ່ເລີດສຸດຄື ແຜ່ນດິນສະຫວັນແມ່ນທີ່ຢູ່ສຳລັບຊາຍ
ແລະຍິງ (ທີ່ໃຫຍ່ຊ່ຳກັນ) ຜູ້ທີ່ເຊື່ອໃນພຣະເຢຊູຄຣິດ
ແລະໄດ້ຕ້ອນຮັບເອົາພຣະອົງມາເປັນພຣະຜູ້ໂຜດໃຫ້ພົ້ນຂອງພວກເຂົາ
ແລະໄດ້ເຊື່ອຟັງພຣະອົງ ໃນຖານະທີ່ເປັນອົງພຣະຜູ້ເປັນເຈົ້າຂອງພວກເຂົາ.
ໃນສະຫວັນມີໜັງສືເຫຼັ້ມໜຶ່ງທີ່ເອີ້ນວ່າ ໜັງສືແຫ່ງຊີວິດ.
ເປັນໜັງສືທີ່ເຕັມໄປດ້ວຍລາຍຊື່ບຸກຄົນ.
ທ່ານຮູ້ບໍວ່າໜັງສືນັ້ນຂຽນຊື່ໃຜໄວ້ແດ່?
ຄືຊື່ຂອງທຸກຄົນທີ່ໄວ້ວາງໃຈໃນພຣະເຢຊູ.




ຊື່ຂອງທ່ານກໍຖືກຂຽນໄວ້ໃນທີ່ນັ້ນບໍ?

ຖ້ອຍຄຳສຸດທ້າຍໃນພຣະຄຳພີທີ່ເວົ້າກ່ຽວກັບສະຫວັນແມ່ນການເຊື້ອເຊີນທີ່ວິເສດຫຼາຍ. “ຝ່າຍພຣະວິນຍານ ແລະເຈົ້າສາວຊົງກ່າວວ່າ, ‘ເຊີນມາ!’ ໃຫ້ຜູ້ທີ່ໄດ້ຍິນນັ້ນກ່າວວ່າ, ‘ເຊີນມາ!’ ໃຫ້ຜູ້ຫິວນ້ຳເຂົ້າມາ. ຜູ້ໃດມີໃຈປາດຖະໜາກໍໃຫ້ຜູ້ນັ້ນມາຮັບນ້ຳສຳລັບຊີວິດໂດຍບໍ່ຕ້ອງເສຍຄ່າ.”



ຟ້າສະຫວັນ, ບ້ານອັນສວຍງາມຂອງພຣະເຈົ້າ

ເລື່ອງໃໝ່ງຈາກພຣະຄຳຂອງພຣະເຈົ້າ, ພຣະຄຳພີ,

ທີ່ສາມາດພົບໄດ້ໃນ

ໂຢຮັນ ບົດທີ 14; 2ໂກຣິນໂທ ບົດທີ 5;
ພຣະນິມິດ ບົດທີ 4, 21, 22

"ຄຳສອນຂອງພຣະອົງໃຫ້ແສງສະຫວ່າງ."
ເພງສັນລະເສີນ 119:130


ຈົບບໍລິບູນ

ເລື່ອງລາວໃນພຣະຄຳພີຕອນນີ້ບອກພວກເຮົາກ່ຽວກັບພຣະເຈົ້າຜູ້ວິເສດ
ຜູ້ທີ່ສ້າງພວກເຮົາ ແລະຢາກໃຫ້ພວກຫຼານຮູ້ຈັກກັບພຣະເຈົ້າດ້ວຍ.

ພຣະເຈົ້າຊົງຮູ້ວ່າ ພວກເຮົາໄດ້ເຮັດການຊົ່ວຫຼາຍຢ່າງ ຊຶ່ງພຣະອົງເອີ້ນວ່າ ຜິດບາບ.
ບົດລົງໂທດຂອງຄວາມບາບຄືຄວາມຕາຍ. ແຕ່ພຣະເຈົ້າຊົງຮັກຫຼານຫຼາຍ
ຈຶ່ງໄດ້ສົ່ງພຣະບຸດອົງດຽວຂອງພຣະອົງລົງມາ, ຄືພຣະເຢຊູ, ໃຫ້ມາຕາຍທີ່ໄມ້ກາງແຂນ
ແລະຮັບໂທດບາບແທນເຮົາ. ຫຼັງຈາກນັ້ນ ພຣະອົງກໍເປັນຄືນມາຈາກຕາຍ
ແລະສະເດັດຄືນສູ່ເຮືອນຂອງພຣະອົງຄືຟ້າສະຫວັນ! ຖ້າຫຼານເຊື່ອໃນພຣະເຢຊູ
ແລະຂໍການອະໄພໂທດບາບຈາກພຣະອົງ, ພຣະອົງຈະຊົງຍົກໂທດໃຫ້ແນ່ນອນ!
ພຣະອົງຈະສະເດັດມາປະທັບໃນຊີວິດຂອງຫຼານທັນທີ,
ແລະຫຼານຈະໄດ້ຢູ່ນຳພຣະອົງຕະຫຼອດໄປເປັນນິດ.

ຖ້າຫຼານເຊື່ອວ່າອັນນີ້ແມ່ນຄວາມຈິງແທ້, ກໍໃຫ້ອະທິຖານກັບພຣະເຈົ້າຕາມນີ້:
ຂ້າແດ່ພຣະເຢຊູ, ຂ້ານ້ອຍເຊື່ອວ່າພຣະອົງຊົງເປັນພຣະເຈົ້າ
ແລະໄດ້ບັງເກີດມາເປັນມະນຸດຕາຍທີ່ໄມ້ກາງແຂນແທນຜິດບາບຂອງຂ້ານ້ອຍ
ແລະບັດນີ້ພຣະອົງໄດ້ຊົງເປັນຄືນມາອີກຄັ້ງ. ຂໍຊົງສະເດັດມາປະທັບໃນຊີວິດຂອງຂ້ານ້ອຍ
ແລະຍົກໂທດຜິດບາບຂອງຂ້ານ້ອຍ, ຂໍຊົງປະທານຊີວິດໃໝ່ໃຫ້ແກ່ຂ້ານ້ອຍດ້ວຍໃນເວລານີ້
ເພື່ອວັນີໜຶ່ງຂ້ານ້ອຍຈະໄດ້ຢູ່ນຳພຣະອົງຕະຫຼອດໄປເປັນນິດ.
ຂໍຊົງຊ່ອຍຂ້ານ້ອຍໃຫ້ເຊື່ອຟັງພຣະອົງ ແລະມີຊີວິດຢູ່ເພື່ອພຣະອົງ ເປັນລູກ. ອາແມນ.

ຈົ່ງອ່ານພຣະຄຳພີ ແລະສົນທະນານຳພຣະເຈົ້າທຸກວັນ!    ໂຢຮັນ 3:16